໕. ຊຽງໝ້ຽງເລືອກເມັຽ

# ໕. ຊຽງໝ້ຽງເລືອກເມັຽ

ນັບແຕ່ສິກອອກມາເປັນຊຽງ ກໍຢູ່ຮັບໃຊ້ພາຍໃນໂຮງ, ແມ່ນວ່າມີວຽກໜັກການໜາປານໃດ ຊຽງໝ້ຽງກໍອາສາເຮັດບໍ່ກຽດ ບໍ່ຄ້ານ ພຍາມີວຽກຫັຽງກໍເອີ້ນຫາເອີ້ນໃຊ້ແຕ່ຊຽງໝ້ຽງເທົ່ານັ້ນ ; ຢູ່ມາມື້ນຶ່ງ ພຍາຜູ່ເປັນອ້າຍໄດ້ເວົ້ານຳຊຽງໝ້ຽງວ່າ ດຽວນີ້ໂຕກໍ ໄດ້ສິກຂາລະເພດອອກມາເປັນຊຽງແລ້ວ, ສົມຄວນຈະຊອກຫາເອົາເມັຽຄືຊາວບ້ານຊາວເມືອງເຂົາສາດີກວ່າ ຈະຢູ່ຜູ່ດຽວືຄືແນວນີ້ ; ຊຽງໝ້ຽງໄດ້ຕອບພຍາວ່າຈະເອົາເມັຽແນວໃດທຸກຄືຫົວເຮືອດນີ້ ດັ່ງຄຳກອນຕອນນຶ່ງ ຊຽນວ່າ :

ເງິນບໍ່ມີ ພໍ່ສູ່ວ ຊິໝາຍເອົາລູກສາວເພິ່ນ ເປັນຫຼື ?
ເຂົ້າບໍ່ມີ ຢູ່ທ້ອງ ຊິຂັນຄຳແມ່ເມັຽ ຊັ້ນບໍ ?

ຊຽງໝ້ຽງເວົ້າຕື່ມວ່າ ຕົນເອງກໍເປັນຂນາດນ້ອງພຍາແຕ່ຫາປາແດກຊິຈ້ຳກໍບໍ່ມີ ຊິເອົາເມັຽໄດ້ແນວໃດ ! ຝ່າຍພຍາ ຈຶ່ງເວົ້າກັບຊຽງໝ້ຽງວ່າ : ບໍ່ຕ້ອງຄຶດອຸກຄຶດອັ່ງດອກ ນາງສນົມເຕັມໂຮງຢາກໄດ້ຜູ່ໃດ ເລືອກເອົາໂລດ ບໍ່ໃຫ້ແຕ່ງໃຫ້ແປງດອກ ຊຽງເອີຍ, ໃຫ້ມຶງໄປເລາະຊອກເບິ່ງ ມັກຜູ່ໃດບອກມາໂລດຈະຈັດການເອົາໃຫ້, ແຕ່ຊຽງໝ້ຽງຕອບພຍາວ່າ ຊິໃຫ້ໄປເລາະຊອກຜູ່ດຽວບໍ່ເປັນດອກ ຄັນຊິໃຫ້ເອົາອີ່ຫຼີ ກໍໃຫ້ເຂົາມາໂຮມກັນຢູ່ໂຮງ ພີ້ ຫລາຍຄົນເລືອກຊ່ວຍກັນຈຶ່ງຊິດີ.

ເພື່ອໃຫ້ໄດ້ຕາມໃຈຊຽງໝ້ຽງ ພຍາຈຶ່ງສັ່ງໃຫ້ສາວສນົມ ທຸກຄົນມາເຕົ້າໂຮມກັນຢູ່ໂຮງ, ເມື່ອສາວສນົມມາໂຮມກັນໝົດ ທຸກຄົນແລ້ວພຍາຈຶ່ງບອກໃຫ້ຮູ້ວ່າ ດຽວນີ້ ຜູ່ໃດຢາກໄດ້ ຊຽງໝ້ຽງໄປເຮັດຜົວບອກມາ, ປາກົດວ່າສາວສນົມແຕ່ລະຄົນໃຜໆກໍຄຶດມັກຊຽງໝ້ຽງ ເພາະວ່າຊຽງໝ້ຽງກໍເປັນບ່າວຜູ່ຈົບ ຜູ່ງາມແຖມຍັງເປັນລູກຂອງພຍາຣາຊາອີກດ້ວຍ.

ເມື່ອຖືກພຍາຊັກຖາມແບວນັ້ນ,
ບັນດາສາວສນົມກໍພາກັນຕອບວ່າແລ້ວແຕ່ບຸນບູຮານສົມພານ ຄາດໄດ້ເປັນຜົວຕົວເມັຽກັບທ້າວ ;
ຈາກນັ້ນຈຶ່ງໃຫ້ຊຽງໝ້ຽງກຳມືທັງສອງເບື້ອງ ແລ້ວໃຫ້ສາວສນົມໝົດທຸກຄົນພາກັນທວາຍ
ຖ້າໃຜທວາຍຖືກຈະຍົກໃຫ້ເປັນເມັຽຊຽງໝ້ຽງໂລດ, ສາວສນົມຈຶ່ງພາກັນທວາຍຕາມແຕ່ຊິຄຶດ ພໍ້ບາງຄົນ
ກໍທວາຍວ່າຊຽງໝ້ຽງກຳໜ່ວຍແກ້ວ ບາງຄົນກໍວ່າຊຽງໝ້ຽງ ກຳເງິນກຳຄຳ
ບາງຄົນກໍວ່າຊຽງໝ້ຽງກຳເພັດນິນຈິນດາ ບາງຄົນກໍວ່າຊຽງໝ້ຽງກຳທ່ອນໄມ້ຈອງໄມ້ຈັນ ;
ທັງໝົດທີ່ສາວສນົມທວາຍມາບໍ່ມີໃຜທວາຍຖືກ ຊຽງໝ້ຽງກໍບໍ່ຍອມແບນມືອກເດັດຂາດ.

ບັດນີ້ໃຜໆກໍທວາຍແລ້ວ ຍັງເຫລືອແຕ່ນາງສເທນທາຜູ່ດຽວ ພຍາກັບຊຽງໝ້ຽງ
ຈຶ່ງໃຫ້ນາງທວາຍລອງເບິ່ງ ນາງສເທນທາທວາຍວ່າ ຊຽງໝ້ຽງກຳແຂນສາວສຳນ້ອຍເມັຽແກ້ວບ່ວາງ .
ພໍແຕ່ສຸດຄວາມທວາຍຂອງນາງສເທນທາ ຊຽງໝ້ຽງກໍຟ້າວແບນມືອອກແລ້ວລຸກຂຶ້ນຕົບມືຜ້າໆ
ບອກວ່ານາງສເທນທາທວາຍຖືກແທ້ຖືກວ່າ ຜູ່ນີ້ຫາກແມ່ນເມັຽແຕ່ຟ້າແຕ່ແຖນແທ້ໆ.
ພຍາຊ້ຳພັດຖາມຊຽງໝ້ຽງຕື່ມອີກວ່າ : ມຶງຊິເອົາແຕ່ຜູ່ດຽວທ່ນັ້ນບໍ ? ບໍ່ເອົາຕື່ມອີກຈັກຄົນບໍ ?
ສາວສນົມບໍ່ອຶດບໍ່ຢາກ ເອົາອີກເດຈັກຄົນ ! ຊຽງໝ້ຽງຕອບວ່າ : ເອົາສອງກໍດີຄືກັນ
ຜູ່ນຶ່ງເປັນເມັຽໃຫຍ່ຄຸ້ມຄອງເຮືອນຊານ ຜູ່ສອງເປັນເມັຽນ້ອຍຄອຍບົວລະບັດຮັກສາ.

ເມື່ອຊຽງໝ້ຽງໄດ້ສາວສນົມທັງສອງຄົນໄປເປັນເມັຽແລ້ວກໍ
ຂາບທູນພຍາກັບເມືອໂຮງຫານາງພຍາ (ເມັຽຂອງພຍາ) ແລ້ວເລົ່າເຫດການທັງໝົດໃຫ້ຮູ້
ຝ່າຍນາງພຍາກໍດີອົກດີໃຈທີ່ໄດ້ໄພ້ທັງສອງ, ຕໍ່ມາຊຽງໝ້ຽງກໍໄດ້ປຸກເຮືອນຫລັງນ້ອຍນຶ່ງຂຶ້ນ
ເພື່ອຢູ່ກັບເມັຽຂອງຊຽງເອງ ແລະ ທຳນາຫາກິນລ້ຽງຊີບໄປແຕ່ລະມື້ລະວັນ....

ອ່ານຕໍ່ເຣື່ອງທີ່ຫົກ ໃນເດືອນໜ້າ
ຜ. ຢາກິນເຂົ້າແຊບຂອງຊຽງໝ້ຽງ